ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 386 /ລບ
ນະຄອນຫຼວງວຽງຈັນ, ວັນທີ 15.12.2017

# ດຳລັດ
## ວ່າດ້ວຍ ວັນພັກ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍ ວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- ອີງຕາມກົດໝາຍ ວ່າດ້ວຍແຮງງານ ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013;
- ອີງຕາມໜັງສືສະເໜີ ສະບັບເລກທີ 337/ພນ, ລົງວັນທີ 16 ພະຈິກ 2017 ຂອງກະຊວງພາຍໃນ.

## ລັດຖະບານ ອອກດຳລັດ :

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດວັນພັກ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ໃຫ້ເປັນເອກະພາບໃນທົ່ວປະເທດ ສຳລັບອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ທ້ອງຖິ່ນ, ສຳນັກງານຜູ້ຕາງໜ້າຂອງ ສປປ ລາວ ທີ່ປະຈຳຢູ່ຕ່າງປະເທດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ, ລັດວິສາຫະກິດ, ວິສາຫະກິດເອກະຊົນລາວ ແລະ ຕ່າງປະເທດ ຢູ່ ສປປ ລາວ.

**ມາດຕາ 2 ວັນພັກ**

ວັນພັກ ແມ່ນວັນຢຸດເຊົາການປະຕິບັດໜ້າທີ່ວຽກງານທາງລັດຖະການ ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ຜູ້ອອກແຮງງານ ຊຶ່ງປະກອບມີ ວັນພັກປະຈຳອາທິດ, ວັນພັກທາງລັດຖະການ ແລະ ວັນພັກຊົດເຊີຍ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ວັນພັກປະຈຳອາທິດ** ໝາຍເຖິງ ວັນເສົາ ແລະ ວັນອາທິດ;
2. **ວັນພັກທາງລັດຖະການ** ໝາຍເຖິງ ວັນທີ່ລັດຖະບານ ອະນຸຍາດໃຫ້ຢຸດເຊົາການປະຕິບັດໜ້າທີ່ວຽກງານ ໃນວັນລັດຖະການ;
3. **ວັນພັກຊົດເຊີຍ** ໝາຍເຖິງ ວັນພັກທົດແທນຄືນ ວັນພັກທາງລັດຖະການ ທີ່ກົງກັບ ວັນເສົາ ຫຼື ວັນອາທິດ.

ມາດຕາ 4 **ວັນພັກທາງລັດຖະການ**

ວັນພັກທາງລັດຖະການ ມີດັ່ງນີ້:

- ວັນທີ 01 ມັງກອນ (ວັນປີໃໝ່ສາກົນ);
- ວັນທີ 08 ມີນາ (ວັນແມ່ຍິງສາກົນ);
- ວັນບຸນປີໃໝ່ລາວ (ວັນສັງຂານລ່ວງ, ວັນສັງຂານເນົາ ແລະ ວັນສັງຂານຂຶ້ນ);
- ວັນທີ 01 ພຶດສະພາ (ວັນກຳມະກອນສາກົນ);
- ວັນທີ 02 ທັນວາ (ວັນສະຖາປະນາ ສປປ ລາວ).

ສຳລັບວັນສຳຄັນອື່ນ ຂອງອົງການ ແລະ ຂະແໜງການ ໃຫ້ກະຊວງ, ອົງການ, ການຈັດຕັ້ງທີ່ກ່ຽວຂ້ອງ ຢູ່ສູນກາງ ແລະ ທ້ອງຖິ່ນ ຈັດພິທີລະນຶກເຖິງວັນດັ່ງກ່າວ ດ້ວຍການຈັດພິທີໂຮມຊຸມນຸມ ຫຼື ສ້າງກິດຈະກຳຕ່າງໆ ໂດຍການມີສ່ວນຮ່ວມຂອງປະຊາຊົນ.

ມາດຕາ 5 **ການຈັດຕັ້ງປະຕິບັດ**

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ອອກແຈ້ງການ ກ່ຽວກັບວັນພັກຊົດເຊີຍ.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເຜີຍແຜ່, ແນະນຳ, ກວດກາການຈັດຕັ້ງປະຕິບັດດຳລັດ ສະບັບນີ້.

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ ແລະ ທ້ອງຖິ່ນ, ສຳນັກງານຜູ້ຕາງໜ້າຂອງ ສປປ ລາວ ທີ່ປະຈຳຢູ່ຕ່າງປະເທດ, ບັນດາອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ, ລັດວິສາຫະກິດ ແລະ ວິສາຫະກິດເອກະຊົນລາວ ແລະ ຕ່າງປະເທດ ຢູ່ ສປປ ລາວ ແລະ ປະຊາຊົນບັນດາເຜົ່າ ຈົ່ງຮັບຮູ້ ແລະ ປະຕິບັດຕາມເນື້ອໃນຂອງດຳລັດສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 6 **ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ 15 ວັນ.

ລັດຖະບານ ແຫ່ງ ສປປ ລາວ

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ